ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ. . .0488. . . ./ ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ. . 12/03/2009

# ແຈ້ງການ

ເຖິງ : ທ່ານ ຫົວໜ້າພະແນກ ອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ,

ເລື້ອງ : ແນະນຳວິທີການຈັດສັນໂກຕ້າໄມ້.

- ອີງຕາມຄຳສັ່ງເລກທີ 17/ນຍ ລົງວັນທີ 22/09/2008 ຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ,ປົກປັກຮັກສາປ່າໄມ້ ແລະ ການປະສານງານໃນການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້.
- ອີງຕາມແຈ້ງການ ຂອງສຳນັກງານນາຍົກລັດຖະມົນຕີ, ຄະນະເລຂາທິການລັດຖະບານ ເລກທີ 127/ຄລບ ລົງວັນທີ 22/1/2009. ເລື່ອງການອະນຸມັດຈັດຕັ້ງປະຕິບັດແຜນການປູກໄມ້, ຟື້ນຟູປ່າໄມ້, ການຂຸດຄົ້ນ ແລະ ການຄ້າເກັບກູ້ເຄື່ອງປ່າຂອງດົງ ປະຈຳສົກປີ 2008-2009.
- ອີງຕາມແຈ້ງການເລກທີ 2056/ອຄ.ກຂອ ລົງວັນທີ 11/12/2008 ເລື້ອງ ແນະນຳການສະເໜີແຜນແບ່ງປັນໂກຕາໄມ້.
- ອີງຕາມໃບສະເໜີ ເລກທີ 234/ສຄອ ລົງວັນທີ 3/3/2009 ຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ກ່ຽວກັບການສະເໜີແຜນການແບ່ງປັນຊື້ໄມ້ນຳລັດ.

ເພື່ອເຮັດໃຫ້ວຽກງານການຂຸດຄົ້ນໄມ້ ແລະ ການຊື້-ຂາຍໄມ້ ໃຫ້ສອດຄ່ອງກັບສະພາບຕົວຈິງ ໃນປັດຈຸບັນ ແລະ ໃຫ້ທັນກຳນົດເວລາກ່ອນການປິດປ່າ.

ກະຊວງ ອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ ແນະນຳວິທີການແບ່ງປັນໂກຕາໄມ້ ເພື່ອໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ລາຍງານການນຳຂອງແຂວງ ແລະ ປະສານກັບຂະແໜງການທີ່ກ່ຽວຂ້ອງຈັດຕັ້ງປະຕິບັດດັ່ງນີ້:

1. <u>ໄມ້ໃນເຂດກໍ່ສ້າງພື້ນຖານໂຄງລ່າງຢູ່ແຂວງ,ນະຄອນຫລວງ</u>.

ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫລວງ ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ສະມາຄົມອຸດສາຫະກຳປຸງແຕ່ງໄມ້ຂອງແຂວງພິຈາລະນາຈັດສັນ ໂດຍຮູບການປະມູນ ຫຼື ທາບທາມລາຄາ ໃຫ້ບັນດາໂຮງງານປຸງແຕ່ງໄມ້ທີ່ໄດ້ຜ່ານການຄັດສົມໄດ້ມາດຕະຖານ ບົນພື້ນຖານລະບຽບການຊື້-ຂາຍໄມ້ ສະບັບເລກທີ 1863/ອຄ.ກຂອ ລົງວັນທີ 8/11/2008 ແລະ ແຈ້ງການ ສະບັບເລກທີ 2056/ອຄ.ກຂອ ລົງວັນທີ 11/12/2008. ຂອງກະຊວງອຸດສາຫະກຳ ແລະ ການຄ້າ.

2. <u>ໄມ້ໃນເຂດປ່າຜະລິດຕາມແຜນການຂຸດຄົ້ນໄມ້ປະຈຳປີຂອງລັດຖະບານໃນນີ້</u> :

ໄມ້ທີ່ຂຸດຄົ້ນໃນເຂດປ່າຜະລິດ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງຈັດຕັ້ງການປະມູນ ຫລື ທາບທາມລາຄາ ແບບເປີດກ້ວາງທົ່ວປະເທດ ໂດຍຜູ້ທີ່ເຂົ້າຮ່ວມການປະມູນຕ້ອງມີເງື່ອນໄຂຄົບຖ້ວນຕາມລະບຽບການຊື້-ຂາຍໄມ້ ສະບັບເລກທີ 1863/ອຄ.ກຂອ ລົງວັນທີ 8/11/2008 ແລະ ຕາມແຈ້ງການ ເລກທີ 2056/ອຄ.ກຂອ ລົງວັນທີ 11/12/2008 ຂອງກະຊວງອຸດສາຫະກຳ ແລະ ການຄ້າ.

ສ່ວນໄມ້ທີ່ຂຸດຄົ້ນຈາກປ່າຜະລິດທີ່ຜ່ານການສຳຫລວດຈັດສັນແບບຍືນນານ ຕ້ອງໄດ້ປະຕິບັດຕາມລະບຽບຂອງໂຄງການຈັດສັນປ່າຜະລິດແບບຍືນນານ ແລະ ພັດທະນາຊົນນະບົດ ຂອງລັດຖະບານ ໂດຍຮູບການປະມູນ. ມູນຄ່າການປະມູນທີ່ເກີນລາຄາ ທີ່ລັດຖະບານກຳນົດ ຕ້ອງໄດ້ແບ່ງປັນຜົນປະໂຫຍດໃຫ້ແກ່ ປະຊາຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ ເພື່ອໃຫ້ປະຊາຊົນ ແລະ ອຳນາດການປົກຄອງໄດ້ຮັບຜົນປະໂຫຍດ ແລະ ມີສ່ວນຮ່ວມໃນການປົກປັກຮັກສາປ່າໄມ້. ສຳລັບຜູ້ທີ່ມີສິດເຂົ້າຮ່ວມການປະມູນຕ້ອງແມ່ນບັນດາໂຮງງານທີ່ໄດ້ຜ່ານການຄັດເລືອກ ແລະ ໄດ້ຮັບການຢັ້ງຢືນຕາມລະບົບການຄຸ້ມຄອງແຫລ່ງທີ່ມາຂອງໄມ້ແບບສາກົນ ( CoC CERTIFICATE ).

3. ສຳລັບໄມ້ຈາກສວນປູກໃຫ້ປະຕິບັດຕາມລະບຽບການຊື້-ຂາຍໄມ້ຈາກສວນປູກ ສະບັບເລກທີ 1862/ອຄ.ກຂອ ລົງວັນທີ 5/11/2008 ແລະ ແຈ້ງການ ສະບັບເລກທີ 1887/ອຄ.ກຂອ ລົງວັນທີ 12/11/2008 ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຈັດຕັ້ງປະຕິບັດຕາມແຈ້ງການນີ້ດ້ວຍ.

ລັດຖະມົນຕີ ວ່າການ

ກະຊວງອຸດສາຫະກຳ ແລະ ການຄ້າ,

ກະຊວງອຸດສາຫະກຳ ແລະ ການຄ້າ

ລັດຖະມົນຕີ

ດຣ. ນາມ ວິຍະເກດ

<u>ບ່ອນສົ່ງ</u> :

- ຄະນະເລຂາທິການລັດຖະບານ
- ກະຊວງກະສິກຳ ແລະ ປ່າໄມ້
- ກະຊວງການເງິນ
- ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ
- ສະມາຄົມອຸດສາຫະກຳປຸງແຕ່ງໄມ້ແຫ່ງຊາດ